ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 10 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 ກຸມພາ 2016

ສໍານັກງານ ຄຄຊ
ຮັບ ເລກທີ...0187......
ວັນທີ 29 FEB 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈໍາອາທິດ ທີ 15/02/2016 ຫາ 19/02/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແຕ່ອ່ອນຄ່າລົງ ເມື່ອທຽບໃສ່ຫຼາຍສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຜູ້ຂໍສະຫວັດດີການວ່າງງານອາທິດທີ 6/02/2016 ຫຼຸດລົງ ເປັນ 269.000 ຄົນ ຈາກ 285.000 ຄົນ ໃນອາທິດຜ່ານມາ. ສ່ວນຫຼາຍສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຕົວເລກການສັ່ງຊື້ເຄື່ອງຈັກຂອງຍີ່ປຸ່ນ ເພີ່ມຂຶ້ນ 4,2% ໃນເດືອນ 12/2015 ຈາກຫຼຸດລົງ 14,4% ໃນເດືອນ 11/2015.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 09/02/2016 | ອາທິດນີ້ 16/02/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---:|---:|---:|
| ເອີໂຣ/ໂດລາ | 1,1194 | 1,1160 | 0,31% |
| ໂດລາ/ເຢນ | 115,10 | 114,44 | 0,58% |
| ໂດລາ/ບາດ | 35,46 | 35,62 | -0,46% |
| ໂດລາ/ເປໂຊ | 47,73 | 47,51 | 0,47% |
| ໂດລາ/ຣູເປັຍ | 13.636 | 13.371,67 | 1,98% |
| ໂດລາ/ໂດລາສິງກະໂປ | 1,4040 | 1,4007 | 0,24% |
| ໂດລາ/ຢວນ | 6,5710 | 6,5107 | 0,93% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 2,04% ຈາກ 33,74 ໂດລາ/ບາເຣວ ມາເປັນ 33,05 ໂດລາ/ບາເຣວ ພາຍຫຼັງສຳນັກງານພະລັງງານສາກົນ (IEA) ປັບຫຼຸດຄາດຄະເນການຂະຫຍາຍຕົວຂອງຄວາມຕ້ອງການນ້ຳມັນໂລກໃນປີ 2016 ລົງຈາກ 1,42 ລ້ານບາເຣວ/ວັນ ໃນໄລຍະຜ່ານມາ ເປັນ 1,24 ລ້ານບາເຣວ/ວັນ.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,87% ຈາກ 1.190,62 ໂດລາ/ອອນ ມາເປັນ 1.200,95 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ ເພື່ອເກັງກຳໄລ ແລະ ປ້ອງກັນຄວາມສ່ຽງ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,08% ສຳລັບອັດຕາ ທທກ ແລະ ອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,28% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,10% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,32% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,57% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 0,68% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,73% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 09/02/2016 | | | ອາທິດນີ້ 16/02/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.114,09 | 8.151,93 | 8.133,16 | 8.119,26 | 8.148,70 | 8.126,90 | -0,06% | 0,040% | 0,08% |
| ບາດ | 229,27 | 230,91 | 230,52 | 228,40 | 230,06 | 229,88 | 0,38% | 0,37% | 0,28% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.141,40 | 8.181,33 | 8.161,37 | 8.134,52 | 8.175,20 | 8.154,86 | 0,08% | 0,08% | 0,08% |
| ບາດ | 229,92 | 230,80 | 230,36 | 230,09 | 231,08 | 230,59 | -0,08% | -0,12% | -0,10% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,34% | 0,36% | 0,35% | 0,19% | 0,33% | 0,34% | | | |
| ບາດ | 0,28% | -0,05% | -0,07% | 0,74% | 0,44% | 0,31% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 0,64% ທຽບໃສ່ວັນທີ 12/02/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,98%;
- ປະລິມານເງິນ M2 ເພີ່ມຂຶ້ນ 1% ເມື່ອທຽບໃສ່ວັນທີ 12/02/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,89%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 15/02/2016) ເຫັນວ່າ ທທກ ຊື້ໂດລາສຸດທິ 94,83 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 131,33 ລ້ານໂດລາ ແລະ ຂາຍໂດລາໄດ້ 36,50 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 3.598,17 ລ້ານບາດ (ໃນນີ້ ຊື້ບາດໄດ້ 344,70 ລ້ານບາດ ແລະ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 3.942,87 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 54,71% ແລະ ເພີ່ມຂຶ້ນ 24,85% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 0,90 ລ້ານໂດລາ ແລະ ເງິນບາດມີຈຳນວນ 104,32 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 21,24 ລ້ານໂດລາ ແລະ ຊື້ເງິນບາດສຸດທິ ຈຳນວນ 442,85 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ·ຈຳນວນ 90,75 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 3.321,23 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09/02/2016 | | ອາທິດທີ 15/02/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. <u>ການຊື້ເງິນຕາຕ່າງປະເທດ</u>** | **95,23** | **378,82** | **131,33** | **344,70** | **37,91** | **-9,01** |
| - ທ/ຄທຸລະກິດລັດ | 16,47 | 213,12 | 11,01 | 146,87 | -33,14% | 31,09% |
| - ທ/ຄທຸລະກິດອື່ນໆ | 78,76 | 165,70 | 120,32 | 197,83 | 52,76% | 19,39% |
| **2. <u>ການຂາຍເງິນຕາຕ່າງປະເທດ</u>** | **57,97** | **2.392,54** | **36,50** | **3.942,87** | **-37,03** | **64,80** |
| - ທ/ຄທຸລະກິດລັດ | 18,78 | 197,18 | 13,32 | 110,60 | -29,04% | -43,91% |
| - ທ/ຄທຸລະກິດອື່ນໆ | 39,19 | 2.195,36 | 23,18 | 3.832,27 | -40,85% | 74,56% |
| <u>ຊື້-ຂາຍສຸດທິ ທທກ</u> | **37,26** | **-2.013,72** | **94,83** | **-3.598,17** | **154,49%** | **78,68%** |
| ຜິດດ່ຽງ ຊື້-ຂາຍ | 39,13 | -531,58 | 72,20 | -1.043,86 | | |
| ມູນຄ່າການຊື້-ຂາຍ | **153,20** | **2.771,36** | **167,84** | **4.287,57** | **9,55%** | **54,71%** |
| **3. <u>ການຊື້ຂາຍລະຫວ່າງທຫລ ກັບ ທທກ</u>** | **-29,17** | **-26,00** | **21,24** | **442,85** | | |
| - ທຫລ ຊື້ຈາກ ທທກ | 0,00 | 00,00 | 0,00 | 442,85 | | |
| - ທຫລ ຂາຍໃຫ້ ທທກ | 29,17 | 26,00 | 21,24 | 0,00 | | |
| **4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u>** | **1,81** | **83,70** | **0,90** | **104,32** | | |
| **5. <u>ທຫລ ກັບ ພາກສ່ວນ ອື່ນໆ</u>** | **63,37** | **2.953,46** | **-90,75** | **3.321,23** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,55 | 2.953,46 | 0,18 | 3.322,39 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 63,92 | 0,00 | 90,92 | 1,17 | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ ໃນເດືອນ 02/2016 ຢູ່ໃນລະດັບ 1,09% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,25% ຈາກ 0,84% ໃນເດືອນ 01/2016 ສາເຫດຍ້ອນໃນໄລຍະບຸນປີໃໝ່ຊາວຈີນ ແລະ ຫວຽດນາມ ຈະມີການໃຊ້ຈ່າຍຫຼາຍຂຶ້ນຊຶ່ງເຮັດໃຫ້ຄວາມຕ້ອງການເພີ່ມຂຶ້ນ.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 132,47 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 33,5% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 915 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 34,56% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 586,72 ຕື້ກີບ ເພີ່ມຂຶ້ນ 19,84% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (12-18/02/2016) ມີຈຳນວນ 1.896 ຄັ້ງ ໂດຍມີມູນຄ່າ 1.214,89 ຕື້ກີບ ເພີ່ມຂຶ້ນ 325,79% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 437 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.171,23 ຈຸດ, ເພີ່ມຂຶ້ນ 0,23% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 590.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,28 ຕື້ກີບ, ເພີ່ມຂຶ້ນ 301,97% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 47,61% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.360 ກີບ/ຮຸ້ນ, ຫຼຸດລົງ 149 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 356.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,55 ຕື້ກີບ, ເພີ່ມຂຶ້ນ 377,34% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 56,99% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,61%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.893 ກີບ/ຮຸ້ນ, ເພີ່ມຂຶ້ນ 65 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 17.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 105,48 ລ້ານກີບ, ຫຼຸດລົງ 56,49% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 49,66% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.000 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ເນື່ອງຈາກບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.898 ກີບ/ຮຸ້ນ, ເພີ່ມຂຶ້ນ 248 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 216.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 627,73 ລ້ານກີບ, ເພີ່ມຂຶ້ນ 236.779,25% ເມື່ອທຽບໃສ່ອາທິດຜ່ານມາ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ເນື່ອງຈາກໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,21%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຈັດກອງປະຊຸມສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະຈຳປີ 2015 ທີ່ໂຮງແຮມດອນຈັນພາເລດ,
- ສຳເລັດການເຂົ້າຮ່ວມເປັນກຽດໃນພິທີເຊັນສັນຍາຮ່ວມທຶນສ້າງຕັ້ງ ບໍລິສັດ ເຊົ່າສິນເຊື່ອ ລະຫວ່າງ ກຸ່ມບໍລິສັດ ໂຄລາວ ທີ່ ສປປ ລາວ;
- ສຳເລັດການແຈ້ງຕອບເຖິງບໍລິສັດນ້ຳມັນເຊື້ອໄຟ ດາລາຈະເລີນ ກ່ຽວກັບໃບສະເໜີພິຈາລະນາ ແລະ ກວດສອບພະນັກງານ ທຫລ;

---

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການປະສານກັບພາກສ່ວນກ່ຽວຂ້ອງ ເພື່ອກະກຽມໃຫ້ແກ່ຄະນະຜູ້ແທນຂອງ ທຫລ ທີ່ຈະເດີນທາງເຂົ້າຮ່ວມກອງປະຊຸມລະດັບສູງພາຍໃຕ້ຫົວຂໍ້: "ການລົງທຶນເພື່ອອານາຄົດ" ທີ່ປະເທດ ອິນເດຍ;
- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາ: ❶ກອງປະຊຸມ ທີ່ຫ້ອງການກຸ່ມ SEAVG ໄດ້ເຊີນຄະນະເຮັດວຽກຈາກບັນດາປະເທດສະມາຊິກເຂົ້າຮ່ວມກອງປະຊຸມກຳນົດຮອບວຽນໃໝ່ ແລະ ໜ້າວຽກກຸ່ມ ທີ່ປະເທດໄທ, ❷ສຳມະນາລະດັບສູງ ໃນຫົວຂໍ້: "ບົດຮຽນກ່ຽວກັບກົນຈັດຕັ້ງປະຕິບັດຂອບວຽກງານການເຊື່ອມໂຍງການເງິນ-ເງິນຕາອາຊຽນ ແລະ ຂອບການຮ່ວມມືອາຊຽນ +3" ທີ່ ທຫລ, ❸ກອງປະຊຸມ 2nd FATF Plenary and working Group meeting for FATF-XXVII ທີ່ນະຄອນຫຼວງປາຣີ ປະເທດຝຣັ່ງ;
- ສຳເລັດການແຈ້ງເຕືອນ ແລະ ນຳສິ່ງເອກະສານຄືນ ໂຮງຊວດຈຳ ຊາຍທອງ ຈຳກັດຜູ້ດຽວ ເນື່ອງຈາກວ່າ ເປີດພິທີຢ່າງເປັນທາງການ ໂດຍບໍ່ໄດ້ຮັບອະນຸຍາດຈາກ ທຫລ;
- ສຳເລັດການຮ່າງ ຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດ ຂອງສະຖາບັນການເງິນ;
- ສຳເລັດການເຊັນສັນຍາກັບໂຄງການ GIZ-APP ກ່ຽວກັບ ການສະເໜີສະໜັບສະໜູນດ້ານງົບປະມານໃນການຈັດກອງປະຊຸມສະຫຼຸບວຽກງານ ສກຈບ ແລະ ສກຈຣ ປະຈຳປີ 2015;

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❸ຄົ້ນຄວ້າ ແລະ ປັບປຸງຮ່າງຄຳແນະນຳວ່າດ້ວຍການຍຶດ ຫຼື ອາຍັດທຶນ ທີ່ພົວພັນກັບການຟອກເງິນ, ❹ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ, ❺ຄົ້ນຄວ້າອອກບົດແນະນຳກ່ຽວກັບການເຊື່ອມມູນຄ່າຂອງຊັບສິນ, ❼ຄົ້ນຄວ້າອອກບົດແນະນຳມາດຕະຖານບັນຊີສາກົນ IAS 18 ກ່ຽວກັບລາຍຮັບ;
- ກະກຽມການເປັນເຈົ້າພາບ ກອງປະຊຸມວິຊາການອາຊຽນຂອງ ສປປ ລາວ ປີ 2016;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015).

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ